# ພິທີເປີດນຳໃຊ້ຜະລິດຕະພັນ OneBank Kid ຢ່າງເປັນທາງການ




ໃນຕອນບ່າຍຂອງວັນສຸກ, ວັນທີ 30 ພຶດສະພາ 2025, ຢູ່ທີ່ ໂຮງແຮມແລນມາກ ນະຄອນຫຼວງວຽງຈັນ, ທຄຕລ ໄດ້ຈັດ ພິທີເປີດໂຕ ຜະລິດຕະພັນ OneBank Kid Application ຢ່າງເປັນທາງການ ໃຫ້ກຽດເປີດພິທີໃນຄັ້ງນີ້ໂດຍ ທ່ານ ບັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ BCEL, ເປັນກຽດເຂົ້າຮ່ວມໂດຍ ທ່ານ ນ ລຳມອນ ສີມມະໄລວົງ ຮອງຫົວໜ້າກົມຄຸ້ມຄອງລະບົບການຊຳລະ, ທ່ານ ປອ. ຄຳວິໄລ ກາດອຸດົມ ຮອງຫົວໜ້າ ກົມຄຸ້ມຄອງທະນາຄານທຸລະກິດ ພ້ອມດ້ວຍບັນດາຄະນະກົມ, ຄະນະພະແນກທີ່ກ່ຽວຂ້ອງຈາກທະນາຄານແຫ່ງ ສປປ ລາວ, ຄະນະກົມຈາກ ກະຊວງສຶກສາທິການ ແລະ ກິລາ, ບັນດາລູກຄ້າຂອງ ທຄຕລ, ບໍລິສັດໃນເຄືອ ທຄຕລ, ຄະນະອຳນວຍການ, ຄະນະພະແນກ, ສູນ ແລະ ສາຂາ ຕະຫຼອດຮອດພະນັກງານຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ;

ໃນຍຸກປະຈຸບັນເທັກໂນໂລຢີໄດ້ມີການພັດທະນາຢ່າງບໍ່ຢຸດຢັ້ງ ເຊິ່ງໄດ້ເຂົ້າມາມີອິດທິພົນໃນການດຳລົງຊີວິດຂອງຄົນໃນປະຈຸບັນ, ທຄຕລ ກໍ່ໄດ້ມີການນຳໃຊ້ຄວາມກ້າວໜ້າຂອງເທັກໂນໂລຢີເຂົ້າມາໜູນໃຊ້ວຽກງານປັບປຸງການບໍລິການ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ບົນພື້ນຖານຄວາມປອດໄພ ແລະ ໄດ້ມາດຕະຖານສາກົນ.

ການເປີດໂຕນຳໃຊ້ຜະລິດຕະພັນ OneBank Kid Application ໃນຄັ້ງນີ້ແມ່ນເປັນອີກບາດກ້າວໜຶ່ງແຫ່ງການພັດທະນາຂອງ ທຄຕລ ເພື່ອທີ່ຈະຂະຫຍາຍ ແລະ ປັບປຸງການບໍລິການໃຫ້ສາມາດຕອບໂຈດໃນຊີວິດປະຈຳວັນ ແລະ ເຂົ້າເຖິງລູກຄ້າໃນທຸກໆຮູບແບບ. ລ່າສຸດຜົນສຳເລັດໃນການພັດທະນາແອັບທາງທະນາຄານໃນທ້າຍປີ

ທີ່ຜ່ານມາ ແມ່ນ ທຄຕລ ໄດ້ເປີດໂຕເພື່ອໃຫ້ບໍລິການແອັບທີ່ມີຊື່ວ່າ OneBank ທີ່ສາມາດນຳໃຊ້ ແລະ ຈັດການບັນຊີແບບເປັນກຸ່ມ ຫຼື ເອີ້ນວ່າໃຊ້ບັນຊີແບບຮ່ວມກັນ. ມີການອັບເດດໜ້າຕ່າງ ທີ່ສະແດງ Dashboard ລາຍຮັບ-ລາຍຈ່າຍ ຂອງເດືອນ, ສາມາດ ເປີດບັນຊີ Virtual ຫຼື ບັນຊີ shadow ທີ່ລິ້ງກັບບັນຊີຫຼັກ ແລະ ການໂອນເງິນແບບ Recurring.

ຜະລິດຕະພັນ OneBank Kid ແມ່ນໄດ້ຕໍ່ຍອດຈາກ One Bank ໃນການນຳໃຊ້ບັນຊີແບບຮ່ວມກັນ, ເຊິ່ງຜູ້ປົກຄອງຈະສາມາດສ້າງສິດນຳໃຊ້ ແລະ ມອບໃຫ້ລູກ ຫຼື ຄົນໃນຄອບຄົວຂອງຕົນເອງ ເພື່ອໄປນຳໃຊ້ ຜ່ານ OneBank Kid ທີ່ມີຮູບແບບການນຳໃຊ້ງ່າຍດາຍ, ມີໜ້າຕ່າງ ລູກຫຼິ້ນທີ່ມີສີສັນກວ່າ ແລະ ຈັດສັນສະເພາະແຕ່ຟັງຊັນທີ່ນຳໃຊ້ໃນຊີວິດປະຈຳວັນເປັນພື້ນຖານ ເພື່ອແນ່ໃສ່ລູກຄ້າທີ່ເປັນເດັກນ້ອຍລຸ້ນເຍົາວະຊົນ ເຊິ່ງເປັນອີກກ້າວສຳຄັນໜຶ່ງໃນການພັດທະນາການບໍລິການທາງການເງິນ ແລະ ເຊື່ອໝັ້ນວ່າການປູກຝັງທັກສະທາງການເງິນຕັ້ງແຕ່ຍັງນ້ອຍຄືຮາກຖານທີ່ໝັ້ນຄົງໃນການສ້າງນິໄສທາງການເງິນທີ່ດີໃນອານາຄົດ ແລະ ນັ້ນແມ່ນຈຸດປະສົງຂອງການສ້າງແອັບ OneBank Kid ຂຶ້ນມາ, ແອັບການເງິນຮູບແບບໃໝ່ທີ່ອອກແບບສະເພາະສຳລັບເດັກນ້ອຍ ໂດຍມີພໍ່, ແມ່ ເປັນຜູ້ຄຸ້ມຄອງ ແລະ ດູແລ, ກຳນົດວົງເງິນການໃຊ້ຈ່າຍຕໍ່ທຸລະກຳ, ຕໍ່ມື້ , ຕໍ່ອາທິດ, ຕໍ່ເດືອນ ສົ່ງເສີມການອອມເງິນ, ສົ່ງເສີມພຶດຕິກຳການໃຊ້ຈ່າຍຢ່າງມີວິໄນ, OneBank Kid ຈະເປັນເຄື່ອງມືທີ່ຊ່ວຍໃຫ້ເດັກນ້ອຍຮຽນຮູ້ວາງແຜນການໃຊ້ເງິນ ແລະ ໃນແອັບຈະມີກະປຸກອອມສິນເພື່ອໃຫ້ເດັກໄດ້ຕັ້ງເປົ້າໝາຍຜ່ານ Future ທີ່ຫລາກຫລາຍມີສີສັນເຊັ່ນ : ກະປຸກໝູ, ຕົ້ນໄມ້, ຫີບສົມບັດ ແລະ ອື່ນໆ, ການໃຫ້ເງິນຂະໜົມປະຈຳວັນ, ປະຈຳອາທິດ ຫລືສາມາດເອົາໃຫ້ເປັນເດືອນ ພໍ່ແມ່ຕັ້ງໂອນແບບ Auto, ສາມາດອອກບັດ Unionpay, Mastercard, ສາມາດສະແກນຈ່າຍ QR Code, ໂອນເງິນ, ຖອນເງິນຜ່ານຕູ້ທີ່ໄດ້ທັງບັດ, QR ແລະ ທີ່ສຳຄັນ OneBank Kid ກໍມີໜ້າຕ່າງ OneID ທີ່ສາມາດສະແກນແທນ QR Code ໄດ້.

ໃນຍຸກແຫ່ງການພັດທະນາທີ່ເທັກໂນໂລຢີມີຄວາມກ້າວໜ້າສູງ ແລະ ເພື່ອການຫັນເປັນດີຈີຕໍ້ຂອງອຸດສະຫະກຳການຊຳລະສະສາງຂອງລາວ ທຄຕລ ຈະສືບຕໍ່ພັດທະນາຜະລິດຕະພັນ ແລະ ການບໍລິການຢ່າງບໍ່ຢຸດຢັ້ງ ໂດຍທຸກຜະລິດຕະພັນ ແລະ ການບໍລິການ ທຄຕລ ແມ່ນເນັ້ນຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເພື່ອນຳສະ ເໜີບໍລິການທາງການເງິນທີ່ຫຼາກຫຼາຍທັນສະໄໝ ຕອບສະໜອງຄວາມຕ້ອງການລູກຄ້າ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ, ເພື່ອໃຫ້ລູກຄ້າ ແລະ ສັງຄົມໄດ້ຮັບປະໂຫຍດສູງສຸດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ